# ປະຫວັດຄວາມເປັນມາຂອງສະມາຄົມນັກຂ່າວ ແຫ່ງ ສປປ ລາວ

ສະມາຄົມນັກຂ່າວ ແຫ່ງ ສປປ ລາວ ແມ່ນອົງການຈັດຕັ້ງການເມືອງ, ສັງຄົມ, ວິຊາຊີບຂອງຜູ້ເຮັດວຽກງານສື່ມວນຊົນ, ເຊິ່ງຖືກສ້າງຕັ້ງ ແລະ ເຄື່ອນໄຫວຕາມກົດໝາຍ, ມີພາລະບົດບາດ ສຶກສາອົບຮົມ, ເຕົ້າໂຮມຄວາມສາມັກຄີ ແລະ ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງສະມາຊິກຕົນ ແລະ ຜູ້ເຮັດວຽກງານດ້ານສື່ມວນຊົນ, ເຂົ້າຮ່ວມໃນການປະຕິບັດແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ ແລະ ນະໂຍບາຍສື່ມວນຊົນ.

ສະມາຄົມນັກຂ່າວລາວມີສະມາຊິກແຈກຢາຍກັນຢູ່ຕາມອົງການສື່ຕ່າງໆ, ລວມທັງຢູ່ກະຊວງ, ອົງການຊາວໜຸ່ມ, ແມ່ຍິງ, ກຳມະບານ, ແນວລາວສ້າງຊາດ, ສະພາແຫ່ງຊາດ, ພະແນກ ຖວທ ນະຄອນຫຼວງ ແລະ ແຂວງຕ່າງໆໃນຂອບເຂດທົ່ວປະເທດ. ແຕ່ລະປີ, ໃນໂອກາດວັນສຳຄັນຕ່າງໆຂອງຊາດ, ສະມາຄົມຈະຈັດກິດຈະກຳໃນຮູບແບບຕ່າງໆ ເປັນຕົ້ນ ການຝຶກອົບຮົມ, ການຈັດການໄປທັດສະນະສຶກສາສຳລັບນັກຂ່າວ ແລະ ບັນນາທິການ, ການຈັດເວທີ ສົນທະນາໃນຫົວຂໍ້ທີ່ກ່ຽວຂ້ອງກັບສະຖານະການ, ການວາງສະແດງຜະລິດຕະພັນສື່, ການແຂ່ງຂັນຂຽນບົດ-ຂຽນຂ່າວ ແລະ ການແຂ່ງຂັນກິລາ ໂດຍມີຈຸດປະສົງເພື່ອຊຸກຍູ້ສົ່ງເສີມ ແລະ ຜູກແໜ້ນຄວາມຮັກແພງສາມັກຄີພາຍໃນ ແລະ ແລກປ່ຽນຖອດຖອນບົດຮຽນທາງດ້ານວິຊາສະເພາະ ແລະ ວິຊາການເຊິ່ງກັນແລະກັນ. ບັນດາກິດຈະກຳເຫຼົ່ານີ້, ສ່ວນຫຼາຍແມ່ນໄດ້ຮັບການສະໜັບສະໜູນເປັນຢ່າງດີຈາກຫຼາຍໆພາກສ່ວນທຸລະກິດທັງພາກລັດ ແລະ ເອກະຊົນ.

ໃນດ້ານວຽກງານການຮ່ວມມືສາກົນ, ສະມາຄົມນັກຂ່າວແຫ່ງສປປ ລາວ ເປັນສະມາຊິກຂອງ ສະມາພັນນັກຂາວອາຊຽນ (Confederation of ASEAN Journalists) ແລະ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈກັບສະມາຄົມນັກຂ່າວແຫ່ງ ສສ ຫວຽດນາມ, ສະມາຄົມນັກຂ່າວ ແຫ່ງ ສປ ຈີນ ແລະ ສະມາຄົມນັກຂ່າວນັກໜັງສືພິມແຫ່ງປະເທດໄທ, ໂດຍຄະນະບໍລິຫານງານໄດ້ມີການແລກປ່ຽນການຢ້ຽມຢາມ, ແລກປ່ຽນບົດຮຽນ ແລະ ໄປທັດສະນະສຶກສາເຊິ່ງກັນແລະກັນ ປີລະຄັ້ງ.

ອີກດ້ານໜຶ່ງ, ສະມາຄົມນັກຂ່າວລາວ ກໍ່ຍັງເຮັດໜ້າທີ່ປະສານງານໂດຍກົງຫາສະມາຄົມນັກຂ່າວຂອງປະເທດຕ່າງໆ ຫຼືປະເທດເພື່ອນບ້ານ ໃນກໍລະນີທີ່ມີນັກຂ່າວຂອງປະເທດເຫຼົ່ານັ້ນ ຂຽນຂ່າວຂຽນບົດທີ່ໃສ່ຮ້າຍປ້າຍສີຕໍ່ ສປປ ລາວ. ຖ້ານັກຂ່າວຄົນນັ້ນຫາກສັງກັດຢູ່ໃນອົງການສື່ທີ່ເປັນສະມາຊິກ, ສະມາຄົມດັ່ງກ່າວກໍ່ຈະຕ້ອງໄດ້ແກ້ໄຂຢ່າງວ່ອງໄວ ແລະທັນການ ບໍ່ວ່າຈະເປັນຜ່ານຊ່ອງທາງຜະລິດຕະພັນສື່ຂອງປະເທດນັ້ນໆ, ຫຼື ຜ່ານຊ່ອງທາງການທູດ ໂດຍຈະໃຫ້ນັກຂ່າວຜູ້ກໍ່ເຫດຄົນນັ້ນເຂົ້າມາຂໍໂທດຜູ້ຕາງໜ້າລັດຖະບານລາວເຮົາຢ່າງເປັນທາງການ.

ນອກຈາກນັ້ນ, ສະມາຄົມນັກຂ່າວລາວ ຍັງໄດ້ເຄື່ອນໄຫວຢ່າງເປັນປົກກະຕິ ຕາມພາລະບົດບາດຂອງຕົນ ແລະ ຕາມການມອບໝາຍຂອງພັກ-ລັດ, ໂດຍມີໂລໂກ, ກາຈ້ຳ, ຫ້ອງການ, ລະບຽບການ, ພ້ອມດ້ວຍ ບັນຊີເງິນຢູ່ທະນາຄານ ແລະລະບົບສາຍໃຍການຈັດຕັ້ງຕາມພາລະບົດບາດຂອງຕົນ, ລວມທັງ ຫຼັກຈັນຍາບັນ-ຈັນຍາທຳ ສຳລັບນັກຂ່າວທີ່ເປັນບັນທັດຖານໃນການເຄື່ອນໄຫວປະຕິບັດໜ້າທີ່ວຽກງານວິຊາຊີບຂອງນັກຂ່າວ.
ສະມາຄົມນັກຂ່າວແຫ່ງ ສປປ ລາວ ກຳເນີດຂຶ້ນ ແລະ ສືບທອດພາລະກິດ ແລະ ມູນເຊື້ອຂອງສື່ມວນຊົນລາວໃນສະໄໝກ່ອນ, ໂດຍມີໜັງສືພິມ "ລາວອິດສະຫຼະ" ເຊິ່ງເປັນສື່ປະຕິວັດອັນທຳອິດຂອງປະເທດລາວ ໄດ້ຮັບການສ້າງຕັ້ງຂຶ້ນໃນວັນທີ 13 ສິງຫາ ປີ 1950 ແລະ ໄດ້ແຕ່ງຕັ້ງ ທ່ານ ສີຊະນະ ສີສານ, ຂຶ້ນເປັນຮອງຫົວໜ້າຄະນະໂຄສະນາ-ອົບຮົມວັດທະນະທຳ ແລະ ທັງເປັນຫົວໜ້າບັນນາທິການໜັງສືພິມ ລາວອິດສະຫຼະ.

ມາຮອດວັນທີ 6 ມັງກອນ 1956 ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຂອງແນວລາວອິດສະຫຼະ ໄດ້ເປີດຂຶ້ນຢ່າງເປັນທາງການຢູ່ແຂວງຫົວພັນ ແລະ ໄດ້ຕົກລົງປ່ຽນຊື່ມາເປັນ "ແນວລາວຮັກຊາດ. ພ້ອມນີ້, ສູນກາງພັກຍັງໄດ້ຕົກລົງປ່ຽນຊື່ໜັງສືພິມລາວອິດສະຫຼະ ມາເປັນໜັງສືພິມ "ລາວຮັກຊາດ "ໂດຍແມ່ນທ່ານ ຄຳຜາຍ ບຸບຜາ ເປັນຫົວໜ້າບັນນາທິການ.

ພາຍໃຕ້ການນຳພາ-ຊີ້ນຳຂອງພັກທີ່ມີການເຕີບໃຫຍ່ຂະຫຍາຍຕົວ, ແລະ ບົນພື້ນຖານຄວາມຮຽກຮ້ອງຕ້ອງການໃນການໂຄສະນາເຜີຍແຜ່ແນວທາງການເມືອງຂອງພັກ ແລະ ກະຈາຍຂໍ້ມູນຂ່າວສານຢ່າງກວ້າງຂວາງ, ມີຫຼາກຫຼາຍຮູບແບບສີສັນ ຜ່ານຫຼາຍລະບົບ, ຫຼາຍຊ່ອງທາງໄປສູ່ປະຊາຊົນໃນຂອບເຂດທົ່ວປະເທດ ແລະ ໄປສູ່ສາກົນ ເພື່ອພາລະກິດຕໍ່ສູ້ປົດປ່ອຍຊາດ, ມາຮອດວັນທີ 13 ສິງຫາ 1960 ວິທະຍຸກະຈາຍສຽງຝ່າຍປະເທດລາວ ຈຶ່ງໄດ້ຖືກສ້າງຕັ້ງຂຶ້ນຢູ່ເມືອງວຽງໄຊ, ແຂວງຫົວພັນ, ເຂດປົດປ່ອຍພາກເໜືອຂອງລາວ, ໂດຍແມ່ນ ທ່ານ ຄຳໄຕ ສີພັນດອນ ເປັນຜູ້ກວດແກ້ບົດຂ່າວ, ທ່ານ ສົມເທີ ເພັດມະນີ ເປັນໂຄສົກ, ທ່ານ ສອນ ຄຳວານວົງສາ, ທ່ານ ຄຳກ້ອນ ແກ້ວໂຍທີ ແລະ ທ່ານ ບຸນເພັງເປັນນັກຂ່າວ.

ຕໍ່ມາ, ອີງຕາມຄວາມຮຽກຮ້ອງຕ້ອງການໃນໄລຍະໃໝ່ຂອງການປະຕິວັດ, ໃນວັນທີ 6 ເດືອນມັງກອນປີ 1968 ສຳນັກຂ່າວສານປະເທດລາວ ໄດ້ຮັບການສ້າງຕັ້ງຂຶ້ນ ຢູ່ເມືອງວຽງໄຊ ແຂວງຫົວພັນ ໂດຍແມ່ນ ທ່ານ ສີຊະນະ ສີສານ ເປັນຜູ້ອຳນວຍການ, ທ່ານ ສອນ ຄຳວານວົງສາ ແລະ ທ່ານ ສົມເທີ ເພັດມະນີ ເປັນຮອງ.

ໃນໄລຍະນັ້ນ, ອົງການສື່ມວນຊົນລາວ ຍັງບໍ່ທັນມີຫຼາຍ ນັກຂ່າວລາວໄປເຄື່ອນໄຫວດ້ານສື່ໃນເວທີສາກົນແມ່ນໄປຮ່ວມນຳອົງການນັກຂ່າວສາກົນ International Organisation of Journalists, ເຊິ່ງເປັນອົງການສື່ຄ້າຍສັງຄົມນິຍົມ, ໂດຍໃນເວລານັ້ນ ກໍ່ມີນັກຂ່າວລາວຈຳນວນໜຶ່ງທີ່ໄດ້ຮັບເຂົ້າເປັນສະມາຊິກຂອງອົງການດັ່ງກ່າວ, ໄດ້ໄປຮ່ວມປະຊຸມຢູ່ປະເທດກູບາ ແລະ ຕໍ່ມາອີກ ກໍ່ມີນັກຂ່າວຫຼາຍຄົນຈາກອົງການສື່ຕ່າງໆຂອງລາວ ທີ່ໄດ້ໄປຍົກລະດັບຄວາມຮູ້ຄວາມສາມາດ ແລະ ທັກສະໃນການເຮັດວຽກດ້ານຖະແຫຼງຂ່າວ-ສື່ມວນຊົນຢູ່ບັນດາປະເທດສັງຄົມນິຍົມ ແລະ ໄປຮ່ວມກອງປະຊຸມດ້ານສື່ຢູ່ບັນດາປະເທດດັ່ງກ່າວ.

ຈົນມາຮອດວັນທີ 2 ທັນວາ 1975 ປະເທດຊາດເຮົາກໍ່ໄດ້ຮັບການປົດປ່ອຍ ແລະ ສະຖາປະນາເປັນ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ, ແລະ ໃນປີ 1976 ວິທະຍຸປະເທດລາວ ແລະ ຂ່າວສານປະເທດລາວ ກໍ່ໄດ້ແຍກອອກເປັນສອງສຳນັກ, ທ່ານ ສີຊະນະ ສີສານ ໄດ້ຖືກແຕ່ງຕັ້ງເປັນປະທານປະຈຳຄະນະກຳມະການຂ່າວສານ, ໜັງສືພິມ, ວິທະຍຸກະຈາຍສຽງ ແລະ ໂທລະພາບແຫ່ງລັດ, ທ່ານ ສອນ ຄຳວານວົງສາ ເປັນຮອງປະທານ ແລະ ທ່ານ ສີສະໜານ ເປັນຫົວໜ້າກົມຂ່າວສານ-ໜັງສືພິມປະຊາຊົນ.

ໃນວັນທີ 12/11/1979 ບັນດານັກຮົບສື່ມວນຊົນລາວ ຈຶ່ງໄດ້ຈັດກອງປະຊຸມໃຫຍ່ຂອງຕົນຂຶ້ນ ແລະ ໄດ້ເລືອກເອົາຄະນະບໍລິຫານງານ “**ສະມາຄົມນັກໜັງສືພິມລາວ**” ຈຳນວນ 11 ທ່ານ ໂດຍແມ່ນ ທ່ານ ອຸ່ນເຮືອນ ພູນສະຫວັດເປັນປະທານ.

1979-1982 ທ່ານ ອຸ່ນເຮືອນ ພູນສະຫວັດ ເປັນປະທານສະມາຄົມ

1982-1988 ທ່ານ ສອນ ຄຳວານວົງສາ ເປັນປະທານສະມາຄົມ (ເປັນຮອງລັດຖະມົນຕີ ແລະ ຫົວໜ້າໜັງສືພິມປະຊາຊົນ

1989-1991 ທ່ານ ບົວບານ ວໍລະຂຸນ ເປັນປະທານສະມາຄົມ (ທັງເປັນ ຮອງລັດຖະມົນຕີ ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ແລະ ຫົວໜ້າບັນນາທິການໜັງສືພິມປະຊາຊົນ)

1992-2005 ທ່ານ ບົວບານ ວໍລະຂຸນ ເປັນປະທານສະມາຄົມ (ທັງເປັນ ຮອງລັດຖະມົນຕີ ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ)

2006-2015 ທ່ານ ສຈ. ດຣ ບໍ່ແສງຄຳ ວົງດາລາ ເປັນປະທານສະມາຄົມ (ຮອງລັດຖະມົນຕີ ກະຊວງ ຖວທ)

2015-2025 ທ່ານ ສະຫວັນຄອນ ຣາຊມຸນຕຣີ ເປັນປະທານສະມາຄົມ (ອະດີດຮອງລັດຖະມົນຕີ ກະຊວງ ຖວທ)

ໃນປີ 1983, ກະຊວງໂຄສະນາ ໄດ້ແຍກອອກເປັນສອງກະຊວງທຽບເທົ່າຄື: ຄະນະກຳມະການຂ່າວສານ, ໜັງສືພິມ, ວິທະຍຸກະຈາຍສຽງ ແລະ ໂທລະພາບແຫ່ງລັດ, ແລະ ທ່ານ ບຸນເຕັງ ວົງໄຊ ໄດ້ຮັບການແຕ່ງຕັ້ງໃຫ້ເປັນຮອງປະທານຄະນະກຳມະການດັ່ງກ່າວ, ທັງເປັນຜູ້ອຳນວຍການໃຫຍ່ ສຳນັກຂ່າວສານປະເທດລາວ ແລະ ຜູ້ຊີ້ນຳວຽກງານສື່ມວນຊົນ.

ການພັດທະນາລະບົບເຕັກໂນໂລຊີດ້ານການສື່ສານ ແລະ ຮູບແບບການກະຈາຍຂໍ້ມູນຂ່າວສານສູ່ສັງຄົມ ແລະ ສາກົນ ໄດ້ມີການພັດທະນາຢ່າງວ່ອງໄວ ແລະ ຕໍ່ເນື່ອງ, ເຊິ່ງເຮັດໃຫ້ມີຄວາມຮຽກຮ້ອງຕ້ອງການດ້ານຂໍ້ມູນຂ່າວສານໃນໄລຍະໃໝ່ ຢູ່ ສປປ ລາວ ເພີ່ມຂຶ້ນ, ແລະ ມາຮອດ ວັນທີ 1 ທັນວາ ປີ 1983 ສະຖານີໂທລະພາບແຫ່ງຊາດລາວ ກໍ່ໄດ້ຖືກສ້າງຕັ້ງຂຶ້ນ.

ໃນປີ 1985 ປະທາຄະນະກຳມະການຂ່າວສານ, ໜັງສືພິມ, ວິທະຍຸກະຈາຍສຽງ ແລະ ໂທລະພາບແຫ່ງລັດ ກໍ່ໄດ້ຮ່າງດຳລັດວ່າດ້ວຍລະບຽບຂອງສະມາຄົມໜັງສືພິມລາວເພື່ອສະເໜີໄປຍັງສະພາລັດຖະມົນຕີ ແລະ ມາຮອດວັນທີ 8 ມີນາ 1985 ດຳລັດຂອງສະພາລັດຖະມົນຕີ ສະບັບເລກທີ 25/ປສລ, ຂອງປະທານສະພາລັດຖະມົນຕີ ກ່ຽວກັບການຮັບຮອງ ແລະ ປະກາດນຳໃຊ້ກົດລະບຽບຂອງສະມາຄົມນັກໜັງສືພິມລາວ ໂດຍ ທ່ານ ໜູຮັກ ພູມສະຫວັນ ຮອງປະທານຜູ້ທີ່ໜຶ່ງຂອງສະພາລັດຖະມົນຕີ ຕາງໜ້າປະທານ ເຊັນຮັບຮອງ.
ຄະນະກຳມະການຂ່າວສານ, ໜັງສືພິມ, ວິທະຍຸກະຈາຍສຽງ ແລະ ໂທລະພາບແຫ່ງລັດ ທີ່ມີຫ້ອງການຢູ່ຕຶກ 3 ຊັ້ນ ຂ້າງຕຶກກະຊວງແຮງງານ, ມີທ່ານ ສອນ ຄຳວານວົງສາ ເປັນປະທານ ແລະ ເປັນຫົວໜ້າບັນນາທິການ ໜັງສືພິມປະຊາຊົນ.
ໃນປີ 1989 ສະມາຄົມໄດ້ຈັດກອງປະຊຸມໃຫຍ່ຂອງຕົນຂຶ້ນ ແລະ ໄດ້ເລືອກເອົາ ທ່ານ ບົວບານ ເປັນປະທານ ສະມາຄົມນັກໜັງສືພິມ, ທ່ານ ຈັນທອນ ທ່ຽງເທບວົງສາ, ເປັນ ຄະນະປະທານ ທັງເປັນຫົວໜ້າກົມຄຸ້ມຄອງໜັງສືພິມ, ເຊິ່ງແມ່ນ ***"ກົມສື່ມວນຊົນ"*** ໃນປະຈຸບັນ.

ໃນປີ 1993, ກົມການເມືອງສູນກາງພັກໄດ້ມີມະຕິເລກທີ 36/ກມສພ (ກ່ຽວກັບການເພີ່ມທະວີການນຳພາຂອງ ພັກ ແລະ ການຄຸ້ມຄອງຂອງລັດ ຕໍ່ສື່ມວນຊົນ ໃນໄລຍະໃໝ່) ໂດຍມີບາງເນື້ອໃນວ່າ, ພາຫະນະສື່ມວນຊົນ ຂອງພວກເຮົາແມ່ນເຄື່ອງມືທາງການເມືອງ-ແນວຄິດ ຂອງບັນດາອົງການຈັດຕັ້ງໃນລະບົບການເມືອງ, ເຊິ່ງມີພັກເປັນແກນນຳ, ມີບົດບາດສຳຄັນໃນການເສີມສ້າງຄວາມສາມັກຄີປອງດອງປວງຊົນທັງຊາດ, ໃນການໂຄສະນາ, ປຸກລະດົມ, ຊຸກຍູ້ການພັດທະນາສ້າງສາເສດຖະກິດ-ສັງຄົມ ຂອງປະເທດເຮົາ, ຫັນປ່ຽນເສດຖະກິດທຳມະຊາດ ເປັນເສດຖະກິດສິນຄ້າ, ໃນການສຶກສາອົບຮົມການເມືອງ-ແນວຄິດ, ສ້າງທັດສະນະຫຼັກໝັ້ນ ແລະ ຄວາມເຊື່ອໝັ້ນຕໍ່ອຸດົມຄະຕິ ແລະ ການນຳພາຂອງພັກໃນການຊຸກຍູ້, ປຸກລະດົມທົ່ວປວງຊົນເຮັດໜ້າທີ່ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ໃນການໂຄສະນາດຶງດູດເອົາການຮ່ວມມື, ການຊ່ວຍເຫຼືອ ແລະ ການລົງທຶນ ຈາກຕ່າງປະເທດ ຕະຫຼອດເຖິງການເສີມຂະຫຍາຍປະຊາທິປະໄຕ ແລະ ການຕໍ່ສູ້ຕ້ານກັບປະກົດການຫຍໍ້ທໍ້ຕ່າງໆທີ່ເກີດຂຶ້ນ ແລະ ອື່ນໆ. ການເຄື່ອນໄຫວວຽກງານຖະແຫຼງຂ່າວສື່ມວນຊົນແມ່ນອີງໃສ່ມະຕິດັ່ງກ່າວ.

ດັ່ງນັ້ນ ເພື່ອໃຫ້ສອດຄ່ອງກັບຍຸກໃໝ່ໃນການສົ່ງເສີມ ແລະ ພັດທະນາວຽກງານຖະແຫຼງຂ່າວສື່ມວນຊົນ, ກອງປະຊຸມໃຫຍ່ຄັ້ງທີ VI ເຊິ່ງຈັດຂຶ້ນໃນປີ 1995 ກໍ່ໄດ້ມີການປ່ຽນຊື່ຈາກ *"ສະມາຄົມນັກໜັງສືພິມລາວ"* ມາເປັນ *"ສະມາຄົມນັກຂ່າວ ແຫ່ງ ສປປ ລາວ "* ແລະ ກອງປະຊຸມດັ່ງກ່າວກໍ່ໄດ້ເລືອກເອົາ ທ່ານ ບົວບານ ວໍລະຂຸນ, ຮອງລັດຖະມົນຕີກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ, ເຊິ່ງທ່ານເອງກໍ່ຍັງເປັນທັງ ຫົວໜ້າໜັງສືພິມ "ປະຊາຊົນ" ແລະ ເປັນ ປະທານສະມາຄົມ ອີກຄັ້ງໜຶ່ງ, ໂດຍກອງປະຊຸມດັ່ງກ່າວໄດ້ຮັບຮອງເອົາຈັນຍາບັນຂອງນັກຂ່າວ, ເຊິ່ງລວມມີ 13 ຂໍ້, ເຊິ່ງໄດ້ຜັນຂະຫຍາຍ ມາຈາກມະຕິກົມການເມືອງສູນກາງພັກສະບັບເລກທີ 36.
ໃນປີ 1995 ປະທານສະມາຄົມ ແລະ ຄະນະໄດ້ຖືກຮັບເຊີນໄປຮ່ວມກອງປະຊຸມສະມາພັນນັກຂ່າວອາຊຽນ Confederation of ASEAN Journalists (CAJ) ຢູ່ປະເທດສິງກະໂປໃນຖານະເປັນຜູ້ສັງເກດການ ແລະ ກອງປະຊຸມປະຈຳປີຂອງສະມາພັນດັ່ງກ່າວ ໄດ້ຈັດຂຶ້ນຢູ່ປະເທດມະເລເຊຍ; ສະມາຄົມນັກຂ່າວແຫ່ງ ສປປ ລາວ ກໍໄດ້ຖືກເຊີນໃຫ້ເຂົ້າຮ່ວມໃນຖານະຜູ້ສັງເກດການ ແລະ ປີ 1997 ສະມາຄົມນັກຂ່າວແຫ່ງ ສປປ ລາວ ໄດ້ຖືກຮັບຮອງເປັນສະມາຊິກສະມາພັນນັກຂ່າວອາຊຽນ, ເຊິ່ງຈັດຂຶ້ນຢູ່ ສສ ຫວຽດນາມ.
ໃນກອງປະຊຸມໃຫຍ່ຄັ້ງທີ VII ຂອງສະມາຄົມນັກຂ່າວລາວ, ທ່ານ ບົວບານ ວໍລະຂຸນ ຮອງລັດຖະມົນຕີ ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ກໍ່ໄດ້ຮັບການເລືອກຕັ້ງເປັນປະທານສະມາຄົມອີກຄັ້ງໃໝ່ ແລະ ໃນຄັ້ງນີ້ກໍ່ໄດ້ມີການປັບປຸງຈັນຍາບັນຂອງນັກຂ່າວໃຫ້ສອດຄ່ອງ ເຊິ່ງໃນຄັ້ງນີ້ ແລມມີ 10 ຂໍ້ ຈົນເຖິງປະຈຸບັນ.

ໃນກອງປະຊຸມໃຫຍ່ຄັ້ງທີ VIII ສະມາຄົມນັກຂ່າວແຫ່ງ ສປປ ລາວ, ກໍ່ໄດ້ເລືອກເອົາ ທ່ານ ສຈ. ດຣ. ບໍ່ແສງຄຳ ວົງດາລາ ຮອງລັດຖະມົນຕີ ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນປະທານສະມາຄົມ.
ໃນກອງປະຊຸມໃຫຍ່ຄັ້ງທີ IX ຈັດຂຶ້ນໃນວັນທີ 17 ກຸມພາ ປີ 2015, ໂດຍມີທ່ານຮອງນາຍົກລັດຖະມົນຕີ ພັນຄຳ ພິລາວັນ ໃຫ້ກຽດເຂົ້າຮ່ວມ ໄດ້ເລືອກເອົາທ່ານ ສະຫວັນຄອນ ຣາຊມຸນຕຣີ ເປັນປະທານ ຈົນເຖິງປະຈຸບັນ. ໃນກອງປະຊຸມໃຫຍ່ຂອງສະມາຄົມນັກຂ່າວ ແຕ່ລະຄັ້ງ ຈະແມ່ນ ຮອງນາຍົກລັດຖະມົນຕີ ຫຼື ນາຍົກລັດຖະມົນຕີໃຫ້ກຽດເຂົ້າຮ່ວມ ແລະ ໂອລົມຕໍ່ກອງປະຊຸມ.

ສະມາຄົມນັກຂ່າວ ສປປ ລາວ ມີພາລະບົດບາດ, ສິດ ແລະ ໜ້າທີ່, ເຊິ່ງໄດ້ລະບຸລະອຽດໄວ້ຢູ່<u>ມາດຕາ 26 ແລະ 27 ຂອງກົດໝາຍສື່ມວນຊົນ ສະບັບປັບປຸງ ເລກທີ 01/ສພຊ, ລົງວັນທີ 4 ພະຈິກ 2016,</u> ລະບຽບຂອງສະມາຄົມ ແລະ ຈັນຍາບັນຂອງສື່ມວນຊົນລາວ.

ສະມາຄົມນັກຂ່າວ ສປປ ລາວ ຂຽນຫຍໍ້ "ສ.ຂ.ລ" ຂຽນເປັນພາສາຝຣັ່ງ Association Des Journalistes Lao (AJL), ຂຽນເປັນພາສາອັງກິດ Lao Journalists Association (LJA), ໂດຍມີສຳນັກງານໃຫຍ່ຕັ້ງຢູ່ນະຄອນຫຼວງວຽງຈັນ ແລະ ມີຫົວໜ້າ ຫຼື ຄະນະພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງໃນຂອບເຂດທົ່ວປະເທດ ເປັນສະມາຊິກ ແລະ ທັງເປັນຈຸດປະສານງານຂອງສະມາຄົມ.
ສະມາຄົມນັກຂ່າວ ສ ປປ ລາວ ມີສິດ ແລະ ໜ້າທີ່ ເຂົ້າຮ່ວມ ສ້າງ, ປະຕິບັດ ແລະ ກວດກາການປະຕິບັດແນວທາງນະໂຍບາຍ ແລະ ກົດໝາຍກ່ຽວກັບວຽກງານຖະແຫຼງຂ່າວ ແລະ ສື່ມວນຊົນ; ກຳນົດ ແລະ ກວດກາການປະຕິບັດ <u>ຈັນຍາບັນຂອງນັກຂ່າວ</u> ແລະ ສົມທົບກັບອົງການຄຸ້ມຄອງສື່ມວນຊົນ, ເຜີຍແຜ່ ແລະ ກວດກາການປະຕິບັດກົດໝາຍ ແລະ ລະບຽບການຂອງສື່ມວນຊົນ; ສົມທົບກັບອົງການຈັດຕັ້ງຂອງພັກ, ລັດ, ອົງການຈັດຕັ້ງມະຫາຊົນ ແລະ ອົງການສື່ມວນຊົນ ເພື່ອບຳລຸງສ້າງດ້ານການເມືອງແນວຄິດ, ຄຸນສົມບັດ ແລະ ຄວາມສາມາດທາງດ້ານວິຊາຊີບໃຫ້ແກ່ນັກຂ່າວ ແລະ ບຸກຄະລາກອນສື່ມວນຊົນ; ສ້າງລາຍຮັບດ້ວຍການເກັບຄ່າສະມາຊິກ, ການຈັດກິດຈະກຳ ແລະ ການໃຫ້ບໍລິການກ່ຽວກັບວຽກງານສື່ມວນຊົນ; ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງສະມາຊິກຕົນ ໃນການເຄື່ອນໄຫວວຽກງານສື່ມວນຊົນ; ປະຕິບັດການຍ້ອງຍໍດ້ວຍຮູບການຕ່າງໆໃຫ້ແກ່ນັກຂ່າວ, ແລະ ບຸກຄະລາກອນສື່ມວນຊົນອື່ນໆທີ່ມີຜົນງານດີເດັ່ນຕໍ່ປະເທດຊາດ, ສັງຄົມ ຫຼື ສາກົນ; ພົວພັນຮ່ວມມືກັບສະມາຄົມນັກຂ່າວ ຕ່າງປະເທດ ໂດຍໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງ ສປປ ລາວ; ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນໆຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ພ້ອມນັ້ນ ສະມາຄົມໄດ້ມີການຈັດກິດຈະກຳຕ່າງໆເພື່ອສະເຫຼີມສະຫຼອງວັນສ້າງຕັ້ງສະມາຄົມ ວັນທີ 13 ສິງຫາ ຮ່ວມກັບອົງການທີ່ກ່ຽວຂ້ອງ ແລະ ອົງການສື່ຕ່າງໆ ເຊັ່ນ ປາຖະກະຖາ, ຈັດຝຶກອົບຮົມ, ແຂ່ງຂັນກິລາ ແລະ ກິດຈະກຳອື່ນໆ; ສະເພາະຄົບຮອບໃຫຍ່ໆ ເປັນຕົ້ນ 60 ປີ, 65 ປີ 70 ປີ ແມ່ນໄດ້ຈັດການວາງສະແດງຜະລິດຕະພັນສື່ມວນຊົນ ແລະ ພິມຈຳໜ່າຍ ໃນລະຫວ່າງ 3-7 ວັນ ໂດຍໄດ້ເຊີນການນຳລວມ ທັງຮອງນາຍົກລັດຖະມົນ, ນາຍົກລັດຖະມົນຕີ ໃຫ້ກຽດມາໂອລົມ, ໃຫ້ຄຳໂອວາດ ແລະ ທິດຊີ້ນຳຕໍ່ນັກຮົບສື່ມວນຊົນ.

ພ້ອມນັ້ນ, ສະມາຄົມຍັງໄດ້ມີການແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນໃນການພັດທະນາບຸກຄະລາກອນດ້ານສື່ຮ່ວມກັນກັບສະມາຊິກສະມາພັນນັກຂ່າວອາຊຽນ ແລະ ປະເທດຄູ່ຮ່ວມເຈລະຈາອາຊຽນ. ອັນພິເສດແມ່ນມີການແລກປ່ຽນການຢ້ຽມຢາມປະຈຳປີລະຫວ່າງສະມາຄົມນັກຂ່າວລາວ ກັບສະມຄົມນັກຂ່າວແຫ່ງ ສສ ຫວຽດນາມ, ສະມາຄົມນັກຂ່າວແຫ່ງ ສປ ຈີນ ແລະ ສະມາຄົມນັກຂ່າວນັກໜັງສືພິມແຫ່ງປະເທດໄທ.

ໃນໂອກາດວັນສື່ມວນຊົນ ແລະ ການພິມຈຳໜ່າຍຄົບຮອບ 65 ປີ, ທີມງານສະມາຄົມນັກຂ່າວຮ່ວມກັບຂະແໜງການຖະແຫຼງຂ່າວສື່ມວນຊົນ ແລະ ພິມຈຳໜ່າຍ ໄດ້ຂຽນປຶ້ມ <u>"ຕົ້ນກຳເນີດ, ປະຫວັດສື່ມວນຊົນ ແລະ ການພິມຈຳໜ່າຍ".</u>

ໃນປີ 2022 ສະມາຄົມນັກຂ່າວລາວ ໄດ້ຮັບອະນຸມັດໃຫ້ຂຽນໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ (GAMCIL) ໂດຍໄດ້ເລືອກເອົາ ອົງການແຄຣ໌ ນານາຊາດ ປະຈາ ສປປ ລາວ, ເປັນຄູ່ຮ່ວມງານ ໃນໄລຍະເວລາ 4 ປີ ເລີ່ມແຕ່ວັນທີ 14 ກັນຍາ 2023 ຫາວັນທີ 28 ກຸມພາ 2027, ເຊິ່ງສະໜັບສະໜູນໂດຍສະຫະພາບເອີຣົບ. ພາຍຫຼັງສຳເລັດການຂຽນໂຄງການ, ທາງກະຊວງ ກໍ່ໄດ້ມອບໃຫ້ກົມສື່ມວນຊົນ ຕາງໜ້າໃຫ້ກະຊວງ ຖວທ ເຊັນບົດບັນທຶກຄວາມເຂົ້າໃຈ ກັບອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ແລະ ຕົກລົງມອບໝາຍໃຫ້ສະມາຄົມນັກຂ່າວແຫ່ງ ສປປ ລາວ ຮ່ວມກັບອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ເປັນຜູ້ຈັດຕັ້ງປະຕິບັດຕົວຈິງ.

ມາຮອດ ກາງປີ 2025, ໂຄງການ GAMCIL ໄດ້ສຳເລັດການຈັດຊຸດຝຶກອົບຮົມຄູຝຶກແລ້ວ 04 ຄັ້ງ ໃນຫົວຂໍ້: **"ການລາຍງານຂ່າວບັນຫາສີຂຽວ**", "ການສ້າງ ແລະ ຄຸ້ມຄອງຫຼັກສູດ ການຮຽນຮູ້ດ້ວຍຕົນເອງ", "ການສ້າງເນື້ອໃນ ແລະ ແຄມເປນ ສຳລັບສື່ສັງຄົມອອນລາຍ" ແລະ "ບົດບາດ ແລະ ຄວາມສະເໝີພາບທາງເພດ" ເຊິ່ງມີຜູ້ເຂົ້າຮ່ວມຈາກພາກລັດທັງໝົດ 36 ຄົນ, ແລະ ຝຶກອົບຮົມໃຫ້ແກ່ຕາງໜ້ານັກຂ່າວທົ່ວປະເທດ ໃນຫົວຂໍ້: "ການລາຍງານຂ່າວບັນຫາສີຂຽວ" ຈຳນວນ 08 ຄັ້ງ, ມີຈຳນວນນັກຂ່າວເຂົ້າຮ່ວມທັງໝົດ 137 ຄົນ,  ພາກລັດ 59 ຄົນ ພາກສັງຄົມ 78 ຄົນ, ໂດຍໃນນີ້ມີທັງ ຜູ້ຕາງໜ້າ CSO, Citizen Journalists and Bloggers, Youtubers, TikTokers and influencers, ເຊິ່ງເຂົາເຈົ້າທັງໝົດນີ້ ໄດ້ລົງທະບຽນເປັນສະມາຊິກຢູ່ໃນກຸ່ມຂອງສະມາຄົມນັກຂ່າວລາວ ເປັນທີ່ຮຽບຮ້ອຍ; ພ້ອມນີ້ ຕຳລາທີ່ນຳເອົາມາສອນແມ່ນໄດ້ສ້າງຂຶ້ນໃໝ່, ເຊິ່ງສອດຄ່ອງກັບຍຸກສະໄໝໂດຍເລັ່ງໃສ່ຫຼັກການ ແລະ ວິທີການເກັບກຳຂ່າວ, ສ້າງບົດເລົ່າເລື່ອງ ແລະ ຜະລິດຂ່າວແບບໃໝ່ໃສ່ສື່ອອນລາຍ ໂດຍນຳໃຊ້ ປັນຍາປະດິດ (AI) ມາຊ່ວຍການວິເຄາະຂ່າວ, ການຕ້ານຂ່າວປອມ, ຄວາມປອດໄພໃນການໃຊ້ສື່ສັງຄົມອອນລາຍ, ການພັດທະນາແບບຍືນຍົງ ແລະ ການປົກປັກຮັກສາສິ່ງແວດລ້ອມ.

ໃນປີ 2023 ລັດຖະບານໄດ້ອອກດຳລັດວ່າດ້ວຍນາມມະຍົດນັກຂ່າວ ສະບັບເລກທີ 217/ລບ, ລົງວັນທີ 12 ມິຖຸນາ 2023, ເຊິ່ງລົງນາມໂດຍທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ.  ຈຸດປະສົງແມ່ນແນໃສ່ເພື່ອໃຫ້ຜູ້ເຄື່ອນໄຫວວຽກງານຖະແຫຼງຂ່າວສື່ມວນຊົນທີ່ມີຜົນງານດີເດັ່ນ, ມີຄຸນງາມຄວາມດີທີ່ໄດ້ອຸທິດເຫື່ອແຮງ ແລະ ສະຕິປັນຍາເຂົ້າໃນການປະຕິບັດໜ້າທີ່ໃນການພັດທະນາຂະແໜງການຂອງຕົນ ເພື່ອຍ້ອງຍສັນລະເສີນ, ຈາລຶກບຸນຄຸນ ແລະ ຊຸກຍູ້ສົ່ງເສີມບົດບາດຂອງສື່ມວນຊົນລາວຢູ່ທຸກຂະແໜງການ ທີ່ໄດ້ປະກອບສ່ວນເຂົ້າໃນພາລະກິດຕໍ່ສູ້ປົດປ່ອຍຊາດ, ແລະ ການປົກປັກຮັກສາ ແລະ ສ້າງພັດທະນາປະເທດຊາດ, ລວມທັງ ຜູ້ທີ່ໄດ້ປະກອບສ່ວນເຂົ້າໃນການ ພັດທະນາວຽກງານຖະແຫຼງຂ່າວ-ສື່ມວນຊົນທີ່ມີຜົນງານອັນໂດດເດັ່ນ ທາງດ້ານວັດຖຸ ແລະ ປັດໄຈ.
ດຳລັດດັ່ງກ່າວໄດ້ເປັນບ່ອນອີງໃນການປະຕິບັດນະໂຍບາຍດ້ານວັດຖຸ ແລະ ຈິດໃຈ ທັງເປັນການຍົກບົດບາດຂອງວຽກງານຖະແຫຼງຂ່າວ-ສື່ມວນຊົນລາວໃຫ້ສູງຂຶ້ນ.

ໃນປີ 2024-2025 ສະມາຄົມນັກຂ່າວລາວ ໄດ້ຮ່ວມກັບສະຖານທູດອົດສະຕຣາລີປະຈຳລາວ ຈັດຊຸດຝຶກອົບຮົມໃຫ້ນັກຂ່າວ 3 ຄັ້ງ, ເຊິ່ງມີນັກຂ່າວຫຼາຍຮ້ອຍຄົນເຂົ້າຮ່ວມແຕ່ສູນກາງລົງຮອດນັກຂ່າວລະດັບເມືອງ, ໂດຍໃນນີ້ມີທັງແບບເຊິ່ງໜ້າ ແລະ ຜ່ານວີດີໂອອອນລາຍ. ການຝຶກອົບຮົມແມ່ນເລັ່ງໃສ່ຫຼັກການ, ວິທີການເກັບກຳຂ່າວ ແລະ ຜະລິດຂ່າວແບບໃໝ່ໂດຍນຳໃຊ້ປັນຍາປະດິດມາຊ່ວຍ, ການຕ້ານຂ່າວປອມ, ຂ່າວບິດເບືອນຄວາມເປັນຈິງ, ຄວາມປອດໄພໃນການໃຊ້ສື່ສັງຄົມອອນລາຍ, ການສ້າງລາຍຮັບດ້ານວິຊາການຂອງອົງການສື່ ແລະ ຄວາມຍືນຍົງຂອງອົງການສື່.

*ຮຽບຮຽງຄືນໂດຍ ທີມງານຂອງຄະນະບໍລິຫານງານ ສະມາຄົມນັກຂ່າວແຫ່ງ ສປປ ລາວ ຊຸດປະຈຸບັນ ແລະ ອະດີດ, ລວມມີ ທ່ານ ສະຫວັນຄອນ ຣາຊມົນຕຣີ, ທ່ານ ສູນທອນ ຄັນທະວົງ, ທ່ານ ບົວລະພັນ ທັນພິລົມ, ທ່ານ ໄວໂຍລິນ ພຣະສະຫວັດ, ທ່ານ ຄຳຄ່ອງ ກອງວົງສາ, ທ່ານ ວໍລະສັກ ປຣະວົງວຽງຄຳ, ທ່ານ ທອງວັນ ບຸນບົວທອງ ແລະ ທ່ານ ທອງຫຼໍ່ ດວງສະຫວັນ.*

*ທີ່ນະຄອນຫຼວງວຽງຈັນ, ວັນທີ 06 ສິງຫາ 2025*